# ສປປ ລາວ ສຳເລັດການເປັນເຈົ້າພາບຈັດກອງປະຊຸມຂັ້ນສູງ

# ຂະແໜງການເງິນ-ທະນາຄານອາຊຽນ ຢ່າງຈົບງາມ

ໃນລະຫວ່າງວັນທີ 1-4 ເດືອນເມສາ 2016 ສປປ ລາວ ໄດ້ຮັບກຽດເປັນຈົ້າພາບ ແລະ ເປັນປະທານກອງປະຊຸມຂັ້ນສູງຂະແໜງການເງິນ-ທະນາຄານອາຊຽນ ຊຶ່ງໄດ້ໄຂຂຶ້ນທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍໃນການຈັດກອງປະຊຸມໃນຄັ້ງນີ້ລວມມີ: ກອງປະຊຸມລັດຖະມົນຕີການເງິນອາຊຽນຄັ້ງທີ 20 ແລະ ກອງປະຊຸມຜູ້ວ່າການທະນາຄານກາງອາຊຽນຄັ້ງທີ 12, ກອງປະຊຸມຮ່ວມລັດຖະມົນຕີການເງິນອາຊຽນ ແລະ ຜູ້ວ່າການທະນາຄານກາງອາຊຽນຄັ້ງທີ 2, ກອງປະຊຸມຮອງລັດຖະມົນຕີກະຊວງການເງິນອາຊຽນ, ຮອງຜູ້ວ່າການທະນາຄານກາງອາຊຽນ, ກອງປະຊຸມຮ່ວມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ (AFCDM) ແລະ ອາຊຽນ+3, ກອງປະຊຸມລັດຖະມົນຕີກະຊວງການເງິນອາຊຽນວົງແຄບ (AFMM Retreat). ໄປຄ່ຽງຄູ່ກັນນີ້ ສປປ ລາວ ຍັງໄດ້ມີການຈັດກອງປະຊຸມປີ່ນອ້ອມ ລວມມີ: ກອງປະຊຸມພົບປະກິນເຂົ້າສວາຍຮ່ວມກັນລະຫວ່າງການນຳຂັ້ນສູງກະຊວງການເງິນຂອງອາຊຽນ ແລະ ກະຊວງການເງິນ ສ. ອາເມລິກາ, ກອງປະຊຸມພົບປະອາຫານທ່ຽງລະຫວ່າງອາຊຽນ ແລະ ສະພາທຸລະກິດ ສ. ອາເມລິກາ, ກອງປະຊຸມພົບປະອາຫານເຊົ້າລະຫວ່າງອາຊຽນ ແລະ ສະພາທຸລະກິດອີຢູ, ກອງປະຊຸມພົບປະອາຫານທ່ຽງລະຫວ່າງອາຊຽນ ແລະ ສະພາທຸລະກິດ ສ. ອາເມລິກາ, ກອງປະຊຸມແລກປ່ຽນຄຳຄິດເຫັນລະຫວ່າງຜູ້ວ່າການທະນາຄານກາງ ແລະ ຜູ້ບໍລິຫານທະນາຄານທຸລະກິດ ອາຊຽນ, ກອງປະຊຸມສຳມະນາລະຫວ່າງ ທຫລ ແລະ ອົງການ OMFIF ແລະ ກອງປະຊຸມຖະແຫຼງຂ່າວຜົນສຳເລັດຂອງກອງປະຊຸມ. ພ້ອມນີ້ການນຳຂັ້ນສູງຂອງຂະແໜງການເງິນແລະທະນາຄານກາງອາຊຽນຍັງໄດ້ເຂົ້າຢ້ຽມຂໍ່ານັບ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ.



ສຳລັບການເປັນເຈົ້າພາບກອງປະຊຸມໃນຄັ້ງນີ້ເປັນຄັ້ງທີ 2 ທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບພາຍຫຼັງທີ່ພວກເຮົາໄດ້ເປັນເຈົ້າພາບໃນປີ 2005 ໂດຍມີຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ລວມມີ: ລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ, ຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ ແລະ ອາຊຽນ +3 (ລວມມີເຂດປົກຄອງພິເສດຮົງກົງ), ເລຂາທິການໃຫ່ຍອາຊຽນ, ຫົວໜ້າ ແລະ ຮອງຫົວໜ້າອົງການຈັດຕັ້ງສາກົນ ເປັນຕົ້ນ ທະນາຄານພັດທະນາອາຊີ, ກອງທຶນການເງິນສາກົນ, ທະນາຄານໂລກ, ຫ້ອງການຕິດຕາມສະພາບເສດຖະກິດ ມະຫາພາກຂອງພາກພື້ນ ອາຊຽນ+3 (AMRO), ກອງທຶນການເງິນສາກົນ (IMF), ທະນາຄານໂລກ (WB) ແລະ ຜູ້ແທນຈາກປະເທດສະມາຊິກ ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມຈຳນວນຫລາຍກວ່າ 200 ທ່ານ.

ໃນການເປັນເຈົ້າພາບ ແລະ ເປັນປະທານກອງປະຊຸມຂັ້ນສູງວຽກງານການເງິນ-ທະນາຄານກາງ ອາຊຽນ ຂອງ ສປປ ລາວ ໃນປີ 2016 ແມ່ນມີຄວາມໝາຍສຳຄັນຢ່າງຍິ່ງເພາະເປັນປີທຳອິດທີ່ບັນດາປະເທດສະມາຊິກອາຊຽນໄດ້ກ້າວເຂົ້າສູ່ການເປັນປະຊາຄົມເສດຖະກິດອາຊຽນ (AEC) ແລະ ເພື່ອຮັບຮອງເອົາແຜນປະຕິບັດງານວຽກ ງານຍຸດທະສາດ (Strategic Action Plan, SAP) ການຈັດຕັ້ງປະຕິບັດວິໄສທັດຂອງ ແຜນແມ່ບົດຂອງ AEC Blueprint ຮອດປີ 2025 ເພື່ອຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ, ເປັນຕົ້ນ ແມ່ນການຮັບຮອງເອົາແຜນການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ ຊຶ່ງລວມມີສາມເສົາຄ້ຳຄື:ການເຊື່ອມໂຍງຂະແໜງການເງິນ , ການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ສະຖຽນລະພາບທາງດ້ານການເງິນ ເພື່ອສະໜັບສະໜູນແຜນໃຫ້ແກ່ AEC Blueprint 2025.

ສຳລັບການຈັດກອງປະຊຸມຜູ້ວ່າການ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ (ACDM) ໃນຄັ້ງນີ້ແມ່ນໄດ້ດຳເນີນພາຍໃຕ້ການເປັນປະທານຂອງທ່ານ ດຣ. ສົມພາວ ໄຟສິດ, ຜູ່ວ່າການທະນາຄານແຫ່ງ ສປປ ລາວ ແລະ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ່ວ່າການທຫລ. ສ່ວນກອງປະຊຸມຮ່ວມລັດຖະມົນຕີການເງິນແລະຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ່ສອງ ແມ່ນພາຍໃຕ້ການເປັນປະທານຮ່ວມ ຂອງ ລັດຖະມົນຕີການເງິນ ແລະຜູ້ວ່າການ ຂອງ ສປປ ລາວ ແລະ ກອງປະຊຸມຮອງລັດຖະມົນຕີ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3 (AFCDM+3) ແມ່ນພາຍໃຕ້ການເປັນປະທານຂອງຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການຂອງ ສປປ ລາວ ແລະ ສປ. ຈີນ.

ຈຸດປະສົງ ແລະ ວາລະຕົ້ນຕໍຂອງກອງປະຊຸມແມ່ນ ເພື່ອປຶກສາຫາລື ແລະ ແລກປ່ຽນທັດສະນະໃນຫຼາຍບັນຫາທີ່ສຳຄັນທີ່ຕິດພັນການການຈັດຕັ້ງປະຕິບັດວິໄສທັດການສ້າງປະຊາຄົມເສດຖະກິດອາຊຽນ, ໂດຍສະເພາະຂອບການຮ່ວມມືວຽກງານການເງິນ-ເງິນຕາຂອງອາຊຽນ ທີ່ລວມມືວຽກງານການເປີດເສລີການບໍລິການ ທາງດ້ານ

ການເງິນ, ການເປີດເສລີບັນຊີທຶນ, ການພັດທະນາຕະຫຼາດທຶນ, ລະບົບການຊໍາລະອາຊຽນ, ການເຂົ້າເຖິງການບໍລິການທາງດ້ານການເງິນ, ຂອບການເຊື່ອມໂຍງຂະແໜງທະນາຄານ. ສໍາລັບຂອບການຮ່ວມມືທາງດ້ານການເງິນອາຊຽນ+3 (ສປ. ຈີນ, ຍີ່ປຸ່ນ ແລະ ສ. ເກົາຫຼີ) ໂດຍສະເພາະວຽກງານທີ່ຕິດພັນກັບຂໍ້ລິເລີ່ມຊຽງໃໝ່ແບບຫຼາຍຝ່າຍ (CMIM) ຊຶ່ງເປັນກົນໄກຊ່ວຍເຫຼືອທາງດ້ານການເງິນໃນເວລາຂາດສະພາບຄ່ອງໄລຍະສັ້ນ ເພື່ອປ້ອງກັນວິກິດການທາງດ້ານການເງິນໃນພາກພື້ນ, ວຽກງານການສ້າງຄວາມເຂັ້ມແຂງໃນການບໍລິຫານໃນການຕິດຕາມສະພາບເສດຖະກິດພາກພື້ນຂອງຫ້ອງການຕິດຕາມສະພາບເສດຖະກິດມະຫາພາກຂອງພາກພື້ນອາຊຽນ+3 (AMRO) ພາຍຫຼັງທີ່ຫັນເປັນອົງການຈັດຕັ້ງສາກົນເມື່ອບໍ່ດົນມານີ້, ແລະ ວຽກງານຂໍ້ລິເລີ່ມຕະຫຼາດພັນທະບັດອາຊີ (ABMI) ເພື່ອສົ່ງເສີມການອອກພັນທະບັດຂ້າມແດນໃນພາກພື້ນ. ນອກນັ້ນ, ໃນກອງປະຊຸມຍັງໄດ້ແລກປ່ຽນຄວາມຄິດຄວາມເຫັນກ່ຽວກັບສະພາບເສດຖະກິດຂອງສາກົນ, ພາກພື້ນກັບອົງການຈັດຕັ້ງສາກົນເປັນຕົ້ນຈາກ IMF, ADB, WB ແລະ AMRO ເພື່ອປຶກສາຫາລືກ່ຽວກັບບັນດາປັດໄຈ ແລະ ຄວາມຜັນຜວນຕ່າງໆ ທາງດ້ານເສດຖະກິດ ເຊິ່ງອາດຈະສົ່ງຜົນກະທົບຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສະຖຽນລະພາບທາງດ້ານການເງິນຂອງພາກພື້ນ.

ສໍາລັບການເຈົ້າພາບ ແລະ ເປັນປະທານກອງປະຊຸມຂັ້ນສູງວຽກງານການເງິນ-ເງິນຕາອາຊຽນໃນຄັ້ງນີ້ໄດ້ເປັນຂີດໝາຍອັນສໍາຄັນ ແລະ ສາມາດບັນລຸຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້ ໂດຍອີງຕາມບັນດາ ວຽກງານທີ່ຕ້ອງໃຫ້ບັນລຸພາຍຫຼັງທີ່ຮັບມາຈາກປະເທດມາເລເຊຍເປັນເຈົ້າພາບໃນປີ 2015, ແລະຮັບປະກັນວຽກງານຕ່າງໆມີຄວາມຄືບໜ້າ ແລະ ເປັນເອກະພາບໃນຫລາຍບັນຫາ ເພື່ອປະກອບສ່ວນເຂົ້າໃນການບັນລຸວິໄສທັດການສ້າງປະຊາຄົມເສດຖະກິດອາຊຽນໃນປີ 2025 ຂອງຂະແໜງການເງິນ-ທະນາຄານກາງອາຊຽນ ສປປ ລາວ ຊຶ່ງລວມມີ ຂອບການຮ່ວມມືທາງດ້ານການເງິນ-ເງິນຕາອາຊຽນແລະ ອາຊຽນ+3 ຄື :

**ຂອບການການຮ່ວມມືທາງດ້ານດານເງິນ-ເງິນຕາອາຊຽນ**

1. ສາມາດຮັບຮອງທາງດ້ານຫຼັກການກ່ຽວກັບເນື້ອໃນຂອງສັນຍາຂໍ້ຜູກພັນທີ 7 ຂອງວຽກງານເປີດເສລີການບໍລິການທາງດ້ານການເງິນ ເພື່ອໃຫ້ມີການລົງນາມໂດຍ ລັດຖະມົນຕີການເງິນຂອງອາຊຽນໃນກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ+3 ທີ່ເມືອງ ແຟຣງເຝີດ, ປະເທດ ເຢຍລະມັນ ໃນຕົ້ນເດືອນພຶດສະພາ 2016;

2. ສາມາດຮັບຮອງເອົາເນື້ອໃນແຜນປະຕິບັດງານດ້ານຍຸດທະສາດ (Strategic Action Plan: SAP) ການເຊື່ອມໂຍງ 10 ປີ (2016-2025) ຂອງຄະນະກໍາມະການຕ່າງໆ, ການຮັບຮອງເອົາແຜນດັ່ງກ່າວ ແມ່ນມີຄວາມໝາຍສໍາຄັນ ເນື່ອງຈາກເປັນເອກະສານພື້ນຖານທີ່ສໍາຄັນໃນການກໍານົດແຜນວຽກຂອງບັນດາຄະນະກໍາມະການທີ່ຈະຂັບເຄື່ອນວຽກງານການເຊື່ອມໂຍງທາງດ້ານການເງິນ-ເງິນຕາຂອງອາຊຽນ ແຕ່ນີ້ຮອດປີ 2025 ເຊິ່ງແຜນຍຸດທະສາດດັ່ງກ່າວ ຈະຮັບຮອງເອົາໂດຍກອງປະຊຸມສະພາລັດຖະມົນຕີເສດຖະກິດອາຊຽນ ເພື່ອສະເໜີກອງປະຊຸມສຸດຍອດອາຊຽນຄັ້ງທີ 28 ຮັບຮອງເອົາ ທີ່ ສປປ ລາວ ໃນເດືອນ ກັນຍາ 2016;

3. ຮັບຮອງເອົາໜ້າວຽກ (TOR) ການສ້າງຕັ້ງໜ່ວຍງານ ແລະ ຄະນະກຳມະການໃໝ່ ເພື່ອຄົ້ນຄວ້າວຽກງານການເຊື່ອມໂຍງຂະແໜງທະນາຄານອາຊຽນເຊັ່ນ: ຄະນະກຳມະການເຊື່ອມໂຍງຂະແໜງການທະນາຄານອາຊຽນ (WC-ABIF), ໜ່ວຍງານວຽກງານປະກັນໄພອາຊຽນ (AIFo) ແລະ ຄະນະກຳມະການໃໝ່ ວ່າດ້ວຍສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ (WC-FINC);

4. ຮັບຮອງເອົາບັນດາປະທານຮ່ວມຂອງທຸກຄະນະກຳມະການ ພາຍໃຕ້ຂອບການເຊື່ອມໂຍງຂະແໜງການເງິນ-ທະນາຄານ (RIA-Fin) ເພື່ອປະຕິບັດໜ້າທີ່ນັບແຕ່ເດືອນ ມິຖຸນາ 2016 ເປັນຕົ້ນໄປ;

❖ **ຂອບການຮ່ວມມືອາຊຽນບວກສາມ**

1.ສຳເລັດການຫັນຫ້ອງການ AMRO ເປັນອົງການຈັດຕັ້ງສາກົນ ແລະ ໄດ້ມີການເປີດສຳນັກງານຢ່າງເປັນທາງການໃນວັນທີ 19 ເດືອນ ກຸມພາ 2016

2. ສຳລັດການຄັດເລືອກ ແລະ ຮັບຮອງເອົາບຸກຄະລາກອນຂັ້ນບໍລິຫານຂອງຫ້ອງການ AMRO ໂດຍສະເພາະຂັ້ນຫົວໜ້າ, ຮອງຫົວໜ້າ ສອງທ່ານແລະ ຫົວໜ້າທີມເສດຖະສາດ (CE) ຄົນໃໝ່;

3. ຮັບຮອງເອົາແຜນງົບປະມານປະຈຳປີ ແລະ ແຜນການເຄື່ອນໄຫວວຽກງານພາຍໃນຂອງຫ້ອງການ AMRO;

4. ຮັບຮອງເອົາບັນຫາ ແລະ ຄວາມຄືບໜ້າຂອງການຜັນຂະຫຍາຍການຮ່ວມມືວຽກງານຂໍ້ລິເລີ່ມຊຽງໃຫມ່ພາຍໃຕ້ການຮ່ວມມືແບບຫຼາຍຝ່າຍ (CMIM) ເຊິ່ງໃນນັ້ນ ລວມທັງການຮັບຮອງເອົາ ການກຳນົດບັນຫາທີ່ເປັນພື້ນຖານ ແລະ ແຜນການດຳເນີນງານຕ່າງໆ ເພື່ອໃຫ້ສອດຄ່ອງການປັບປຸງສັນຍາແມ່ CMIM.

5. ຮັບຮອງເອົາຖະແຫຼງການຮ່ວມກອງປະຊຸມຮ່ວມລະຫວ່າງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 2 ເຊິ່ງສາມາດເຂົ້າຫາຂໍ້ມູນໄດ້ທີ່ www.aseansec.org.com.

ສຳລັບການເປັນປະທານ ແລະ ເຈົ້າພາບໃນການຈັດກອງປະຊຸມໃນຄັ້ງນີ້ເຫັນວ່າໄດ້ຮັບຜົນສຳເລັດຢ່າງຈົບງາມ, ແລະເປັນການສ້າງນິມິດໝາຍໃໝ່ຂອງການຮ່ວມມືໃນຂົງເຂດການເງິນ-ທະນາຄານກາງອາຊຽນ, ເປັນການປະຕິບັດພັນທະໜ້າທີ່ຂອງ ສປປ ລາວ ໃນຖານປະເທດສະມາຊິກ ແລະ ທັງຍົກຖານະບົດບາດຂອງຂະແໜງການເງິນ-ທະນາຄານຂອງ ສປປ ລາວ ໃຫ້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ສປປ ລາວ ໄດ້ຮັບການຍ້ອງຍໍສັນລະເສີນຈາກຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຈາກປະເທດສະມາຊິກຫຼາຍປະເທດໃນການເປັນປະທານກອງປະຊຸມ, ເນື້ອໃນກອງປະຊຸມ, ການຕ້ອນຮັບ, ສະຖານທີ່ປະຊຸມ ລວມທັງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ.